ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

=====000=====

ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ

ເລກທີ 021 /ສຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 05 JUN 2015

# ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບປັບປຸງລະບົບເວັບໄຊ ແລະ ລະບົບກະດານຂ່າວ ຂອງສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ

- ອີງຕາມແຈ້ງການການເຜີຍແຜ່ຂໍ້ມູນຜ່ານເວັບໄຊຂອງຄະນະກໍາມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 389/ສຄຄຊ, ລົງວັນທີ 27 ກຸມພາ 2014;
- ອີງຕາມທິດຊີ້ນໍາຂອງ ທ່ານ ຮັກສາການຫົວໜ້າສໍານັກງານ ຄຄຊ ໃນກອງປະຊຸມກົມ ຄັ້ງວັນທີ 19 ພຶດສະພາ 2015;
- ອີງຕາມຄວາມຈໍາເປັນຮີບດ່ວນໃນການປັບປຸງເນື້ອໃນເວັບໄຊຂອງຄະນະກໍາມະການຄຸ້ມຄອງຫຼັກຊັບ.

## ຮັກສາການ ຫົວໜ້າສໍານັກງານ ຄຄຊ ອອກຂໍ້ຕົກລົງ:

**ມາດຕາ 1** ແຕ່ງຕັ້ງຄະນະຮັບຜິດຊອບປັບປຸງລະບົບເວບໄຊ ແລະ ລະບົບກະດານຂ່າວຂອງສໍານັກງານ ຄຄຊ ດັ່ງມີລາຍຊື່ລຸ່ມນີ້:

1. ທ່ານ ສຸລິສັກ ທໍານຸວົງ ຮອງຫົວໜ້າສໍານັກງານ ຄຄຊ ເປັນຫົວໜ້າຄະນະ;
2. ທ່ານ ນາງ ລໍາມອນ ສີມມະໄລວົງ ຮອງຫົວໜ້າພະແນກຈັດຕັ້ງ ແລະ ບໍລິຫານ ເປັນຮອງຫົວໜ້າຄະນະ;
3. ທ່ານ ສຽວສະຫວາດ ທິລະກຸນ ຫົວໜ້າພະແນກຄຸ້ມຄອງການອອກຈໍາໜ່າຍຫຼັກຊັບ ເປັນຄະນະ;
4. ທ່ານ ບຸນຈິງ ກອງຄໍາ ຫົວໜ້າພະແນກຄຸ້ມຄອງຕະຫຼາດຫຼັກຊັບ ເປັນຄະນະ;
5. ທ່ານ ນາງ ວຽງດາລີ ສຸພານຸວົງ ຫົວໜ້າພະແນກຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ ເປັນຄະນະ;
6. ທ່ານ ບົວລໍາພູ ຄໍາມະນີວົງ ຮອງຫົວໜ້າພະແນກນິຕິກໍາ ເປັນຄະນະ;
7. ທ່ານ ດຣ. ສຸດທິເດດ ບຸນລີໄຊ ຮອງຫົວໜ້າພະແນກຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ ເປັນຄະນະ.

**ມາດຕາ 2 ໜ້າທີ່ຄວາມຮັບຜິດຊອບ**

ຄະນະທີ່ຖືກແຕ່ງຕັ້ງມີໜ້າທີ່ໃນການຄົ້ນຄວ້າປຶກສາຫາລືຮ່ວມກັນໃນການຂຶ້ນແຜນຮອບດ້ານ ກ່ຽວກັບການປັບປຸງເວັບໄຊ ແລະ ລະບົບກະດານຂ່າວ ໃຫ້ແທດເໝາະກັບການຂະຫຍາຍຕົວຂອງວຽກງານຫຼັກຊັບ ເພື່ອນໍາສະເໜີຕໍ່ ຄະນະສໍານັກງານ ຄຄຊ ມີທິດຊີ້ນໍາໃນການປັບປຸງບັນດາລະບົບດັ່ງກ່າວ ເພື່ອໃຫ້ມີຄວາມທັນສະໄໝ, ສາມາດເປັນຊ່ອງທາງໜຶ່ງໃນການເຜີຍແຜ່ບັນດາຂໍ້ມູນ-ຂ່າວສານ ທີ່ກ່ຽວຂ້ອງກັບວຽກງານຫຼັກຊັບໃຫ້ມີເນື້ອໃນຄົບຖ້ວນ, ຖືກຕ້ອງ, ມີຄວາມຫຼາກຫຼາຍ ແລະ ສາມາດເຜີຍແຜ່ຕໍ່ພະນັກງານທັງພາຍໃນ ແລະ ພາຍນອກໄດ້ຢ່າງມີປະສິດທິຜົນ;

**ມາດຕາ 3 ການຈັດຕັ້ງປະຕິບັດ**

ມອບໃຫ້ຄະນະທີ່ຖືກແຕ່ງຕັ້ງປຶກສາຫາລື, ແບ່ງງານ, ແບ່ງຄວາມຮັບຜິດຊອບກັນລະອຽດ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໄດ້ຮັບຜົນດີ, ພ້ອມນີ້ກໍ່ໃຫ້ສະຫຼຸບ ແລະ ລາຍງານຜົນການຈັດຕັ້ງປະຕິບັດວຽກດັ່ງກ່າວໃຫ້ ທ່ານຮັກສາການຫົວໜ້າສຳນັກງານ ຄຄຊ ຮັບຊາບເປັນແຕ່ລະໄລຍະ.

**ມາດຕາ 4 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຮັກສາການຫົວໜ້າສຳນັກງານ ຄຄຊ**

**ສາຍສະໝອນ ຈັນທະຈັກ**